*Souphanouvong University Journal of Multidisciplinary Research and Development*
*2024, Vol. 10, Special Issue, 01-05*
*https://doi.org/10.69692/SUJMRD10special01*

# Study Lecturer' ICT Skill in Teaching and Learning Implementation at Luang Prabang Teacher Training College, Academic year 2024-2025

**Panomphone KHONESAVATH [1], Kalaphath KOUNLAXAY [2], Kinnaly THIPPHAPHONE[3]**
*Master's degree students majoring education and development, Faculty of Education, Souphanouvong University Lao PDR*

***Correspondence:** Panomphone KHONESAVATH, Faculty of Education, Souphanouvong University, Tel: 020 28282751, Email: panomphone@lpttc.edu.la*

***Submitted: December 05, 2024***
***Revised: December 15, 2024***
***Accepted: December 25, 2024***

**Abstract**

This research is a quantitative and qualitative research through the participatory research process of teachers in Luang Prabang Teachers College, which aims to: 1) To study the results of using ICT in the teaching and learning of teachers in Luang Prabang Teachers College. 2) To study the development of ICT skills according to the standards of ICT teachers in the Lao PDR. The research target group this time is 104 people, using the study method to analyze documents, related research, using questionnaires to collect data directly from teachers. Data analysis uses a quantitative analysis method, to lead to the explanation of the results in a causal manner to the reality of the data as much as possible.

The research result found that the ICT skills development of teachers in Luang Prabang Teachers' College was at a very high level $\bar{X}$= 3.86 S.D. = 0.84, where the ICT skills had a higher mean value $\bar{X}$= 4.04 S.D. = 0.84; followed by computer skills $\bar{X}$= 3.86 S.D. = 0.84 and ICT skills in teaching $\bar{X}$= 3.74 S.D. = 0.84; and the Internet skills had the lowest mean value $\bar{X}$= 3.72 S.D. = 0.86. Guidelines for the development of ICT skills of teachers in Luang Prabang Teachers' Training College Administrators should disseminate or introduce basic computer skills to teachers in schools, organize teacher competence assessment in the initial stage, plan and prepare for internal training or invite external experts, promote and cooperate with personnel to develop themselves in various areas, and provide opportunities for teachers to share lessons with each other.

**Keywords:** ICT skill development, Lecturer's ICT kill in teaching and learning imprementation.

## 1. ພາກສະເໜີ

ໃນປະຈຸບັນທົ່ວໂລກໃຫ້ຄວາມສຳຄັນຕໍ່ກັບການຂະຫຍາຍຕົວຢ່າງວ່ອງໄວ ແລະ ກ້າວກະໂດດຂັ້ນຂອງເຕັກໂນໂລຊີ ແລະ ຍ້ອນວິວັດທະນາການທາງດ້ານວິທະຍາສາດ ໄດ້ຮັບການຂະຫຍາຍຕົວຢ່າງກ້າວກະໂດດຂັ້ນ, ໂດຍສະເພາະທາງດ້ານການຄ້າ ແລະ ການພັດທະນາເສດຖະກິດ-ສັງຄົມ ຂອງແຕ່ລະປະເທດ ແລະ ແຕ່ລະປະເທດກໍລ້ວນແຕ່ໄດ້ນຳໃຊ້ເຕັກໂນໂລຊີ ທີ່ທັນສະໄໝ ແລະ ກ້າວໜ້າ ເພື່ອເຮັດໃຫ້ການຜະລິດ, ການບໍລິການການຄຸ້ມຄອງບໍລິຫານການຄ້າ ແລະການພັດທະນາດັ່ງກ່າວເປັນໄປຢ່າງວອງໄວ ແລະ ມີປະສິດທິພາບສູງຂຶ້ນໄປ. ພ້ອມກັນນັ້ນການພັດທະນາໃນດ້ານຂໍ້ມູນຂ່າວສານເຕັກໂນໂລຊີ ຫຼື Information Communication Technology (ICT)ໄດ້ຮັບການເອົາໃຈໃສ່ ພັດທະນາ ແລະ ນຳໃຊ້ຢ່າງກວ້າງຂວາງ (Ghavifekr & Rosdy, 2015) ພັກປະຊາຊົນປະຕິວັດລາວ ກໍຄືລັດຖະບານແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວ ໄດ້ໃຫ້ຄວາມສຳຄັນຕໍ່ການພັດທະນາໄອຊີທີ (ICT) ດຳລັດວ່າດ້ວຍການບໍລິຫານ ແລະ ບໍລິການລັດແບບດິຈິຕອນການຫັນສູ້ການບໍລິຫານລັດແບບດິຈິຕອນກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ຕ້ອງໄດ້ປັບປຸງການເຄື່ອນໄຫວ, ສ້າງກົນໄກ ແລະ ເງື່ອນໄຂ ເພື່ອຫັນໄປສູ່ການບໍລິຫານແບບດິຈິຕອນ, (Ratheeswari, 2018) ພ້ອມທັງເສີມຂະຫຍາຍການນຳໃຊ້ເຕັກໂນໂລຊີດິຈິຕອນເຂົ້າໃນວຽກງານບໍລິຫານ ແລະ ບໍລິການຂອງອົງການຈັດຕັ້ງຕາມຄວາມເໝາະສົມແລະ ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ແລະ ມີນະໂຍບາຍ, ແຜນພັດທະນາ ແລະ ຍົກສູງລະດັບຄວາມຮູ້ ຄວາມສາມາດ ດ້ານເຕັກໂນໂລຊີດິຈິຕອນ, ວິທະຍາສາດຄອມພິວເຕີ ແລະ ດ້ານອື່ນໆ. ແລະແຂ່ງຂັນກັບບັນດາປະເທດພາກພື້ນ ແລະ ພັດທະນາຊັບພະຍາກອນມະນຸດໃຫ້ໄດ້ຕາມ 3 ລັກສະນະ 5 ຫຼັກມູນການສຶກສາ ພ້ອມທັງຮັບປະກັນໃຫ້ມີທັກສະ ແລະ ຄວາມຮູ້ຄວາມສາມາດນຳໃຊ້ວິທະຍາສາດເຕັກນິກ, ພາສາຕ່າງປະເທດ, ເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ການສື່ສານ ເປັນຮູບປະທຳ ການພັດທະນາການສຶກສາ ແລະ ກິລາຕ້ອງເປັນວຽກງານໃຈກາງ

ຂອງການພັດທະນາຊັບພະຍາກອນມະນຸດໃຫ້ບັນລຸໄດ້ຕາມເປົ້າໝາຍທີ່ກຳນົດໄວ້ (National Assembly, 2020)

ໃນປີ 2020 ທີ່ຜ່ານມາຫຼາຍປະເທດທົ່ວໂລກ ລວມເຖິງ ສປປ ລາວ ໄດ້ປະເຊີນກັບການແຜ່ລະບາດຂອງພະຍາດໂຄວິດ 19 ຫຼື (COVID-19) ມັນໄດ້ສົ່ງຜົນກະທົບຕໍ່ຫຼາຍໆວຽກງານ ຕະຫຼອດຮອດການດຳລົງຊີວິດຂອງຄົນເຮົາມີການປ່ຽນແປງໃນທຸກໆດ້ານບໍ່ວ່າຈະເປັນດ້ານເສດຖະກິດ, ສາທາລະນະສຸກ, ວັດທະນະທຳ-ສັງຄົມ ການສຶກສາ ແລະ ອື່ນໆ. ການຈັດການຮຽນການສອນ ຕ້ອງໄດ້ປັບປ່ຽນໃຫ້ສອດຄອງກັບສະຖານະການ New Normal, ມີທັງການຮຽນແບບປົກກະຕິ ແລະ ການຮຽນໃນຮູບແບບອື່ນໆຢູ່ນອກໂຮງຮຽນ ແລະ ຕ້ອງໄດ້ຈັດການຮຽນ-ການສອນແບບ Online ຫຼາຍຂຶ້ນ (UNICEF, 2023); (National University of Lao, 2022) ໃນແຜນຍຸດທະສາດ ຂອງຂະແໜງການສຶກສາທິການ ແລະ ກິລາ ຮອດປີ 2025 ໄດ້ລະບຸເຖິງການສົ່ງເສີມການຝຶກອົບຮົມ ແລະ ຍົກລະດັບ ຄູ ແລະ ບຸກຄະລາກອນທາງການສຶກສາ ແລະ ກິລາ ພັດທະນາຄູໃຫ້ຮູ້ນຳໃຊ້ໄອຊີທີ (ICT) ໃນການຄົ້ນຄວ້າ, ທົດລອງການຝຶກອົບຮົມທາງໄກ ໂດຍຜ່ານລະບົບ E-Learning ໃນບ່ອນທີ່ມີເງື່ອນໄຂ, ພ້ອມທັງສ້າງເງື່ອນໄຂ ໃຫ້ມີການຮຽນຮູ້ຕະຫຼອດຊີວິດໃຫ້ແກ່ຄູ ແລະ ບຸກຄະລາກອນສຶກສາ (DIGITAL KIDS ASIA-PACIFIC, 2020)

ດັ່ງນັ້ນ, ການພັດທະນາການສຶກສາໃຫ້ປະສົບຜົນສຳເລັດຕາມຈຸດປະສົງ ທັກສະການນຳໃຊ້ ໄອຊີທີ(ICT) ເຂົ້າໃນຈັດການຮຽນ-ການສອນ ໃນສະຖານການສຶກສາທຸກລະດັບ ຍິ່ງມີຄວາມສຳຄັນ ແລະ ຈຳເປັນຢ່າງຍິ່ງ. ສະນັ້ນ ເປັນສິ່ງທ້າທາຍຫຼາຍຢ່າງສຳລັບຄູ-ອາຈານ ພາຍໃນວິທະຍາໄລຄູຫຼວງພະບາງ ຕໍ່ກັບທັກສະການນຳໃຊ້ໄອຊີທີ (ICT) ເຂົ້າໃນການຈັດການຮຽນ-ການ ສອນ ເປັນຕົ້ນ ວ່າ ຄູ- ອາຈານຕ້ອງມີທັກສະການນຳໃຊ້ຄອມພິວເຕີພື້ນຖານເຊັ່ນ: ທັກສະການນຳໃຊ້ຄອມພິວເຕີ ໃນການແຕ່ງບົດສອນ, ການລົງໂປຣແກຣມ, ການລົງວິນໂດ, ການແຕ່ງພາວເວີພອຍ ການນຳໃຊ້ Excel ໃນການຄິດໄລ່ຄວາມຖີ່ , ສ່ວນຮ້ອຍ, ການລວມຄະແນນ ແລະ ວຽກງານອື່ນໆ ການເຂົ້າ ຫຼື ເຊື່ອມອິນເຕີເນັດເພື່ອຄົ້ນຂໍ້ມູນມາຊ່ວຍການແຕ່ງບົດສອນຍັງມີລັກສະນະຊັກຊ້າ, ບໍ່ຫຼາກຫຼາຍ, ການດາວໂຫຼດຂໍ້ມູນການເກັບຮັກສາຂໍ້ມູນ. ນອກນັ້ນ, ການນຳໃຊ້ອຸປະກອນໄອຊີທີ (ICT) ເຂົ້າໃນການສອນເຊັ່ນ: ທີວີສາຍແອວຊີດີ, ການໃຊ້ໂປຣເຈັກເຕີ, ກ້ອງຖ່າຍຮູບ, ແຜ່ນຊີດີ (VCD) ຢູເອສບີ (USB), ຮາດແວ (Hardware) ແລະ ຊອບແວ (Software) ຕ່າງໆທີ່ຊ່ວຍໃຫ້ການຮຽນ-ການສອນຍັງມີຄວາມຈຳກັດ ແລະ ບໍ່ຕອບສະໜອງຕາມຄວາມຕ້ອງການ. ຈາກສິ່ງທ້າທາຍ ແລະ ບັນຫາ ທີ່ຍົກມາຂ້າງເທິງນັ້ນຜູ້ຄົ້ນຄວ້າໃນຖານະເປັນຄູສອນໄອຊີທີ (ICT) ຈຶ່ງມີຄວາມສົນໃຈທີຈະສຶກສາຄົ້ນຄວ້າ ຫົວຂໍ້: ສຶກສາທັກສະການນຳໃຊ້ໄອຊີທີ (ICT) ຂອງຄູໃນວິທະຍາໄລຄູຫຼວງພະບາງ ເພື່ອເປັນແນວທາງ ຫຼື ບ່ອນອີງໃຫ້ແກ່ຄູສອນໄດ້ປັບປຸງ ແລະ ພັດທະນາອາຊີບການສອນຂອງຕົນໃຫ້ມີປະສິດ ທິພາບຫຼາຍຂຶ້ນ.

ເມື່ອເຫັນໄດ້ເຖິ່ງຄວາມສຳຄັນທາງດ້ານການຈັດການຮຽນການສອນໃນຍຸກສະຕາວັດໃໝ່. ດັ່ງນັ້ນ, ຜູ້ສຶກສາຈຶ່ງມີຄວາມສົນໃຈສຶກສາທັກສະການນຳໃຊ້ໄອຊີທີ (ICT) ຂອງຄູໃນວິທະຍາໄລຄູຫຼວງພະບາງ. ໂດຍມີຈຸດປະສົງເພື່ອ ສຶກສາສະພາບການນຳໃຊ້ໄອຊີທີ (ICT) ເຂົ້າໃນການຮຽນ-ການສອນ ຂອງຄູໃນວິທະຍາໄລຄູຫຼວງພະບາງ ແລະເພື່ອສຶກສາແນວທາງພັດທະນາທັກສະການນຳໃຊ້ ໄອຊີທີ (ICT) ຕາມມາດຕະຖານສະມັດຖະພາບດ້ານICT ຂອງຄູ ໃນສປປ ລາວ.

## 2. ອຸປະກອນ ແລະ ວິທີການ

### 2.1 ກຸ່ມເປົ້າໝາຍ

ກຸ່ມເປົ້າໝາຍໃນການສຶກສາໃນຄັ້ງນີ້ແມ່ນໄດ້ກຳນົດເອົາຄູສອນພາຍໃນວິທະຍາໄລຄູຫຼວງພະບາງຈຳນວນ 104 ທ່ານ, ຍິງ 58 ທ່ານ ເນື່ອງຈາກວ່າກຸ່ມເປົ້າໝາຍມີຈຳນວນໜ້ອຍ ຈຶ່ງໄດ້ກຳນົດເອົາທັງໝົດເພື່ອເປັນກຸ່ມເປົ້າໝາຍໃນການຄົ້ນຄວ້າ.

### 2.2 ເຄື່ອງມື ທີ່ໃຊ້ໃນການເກັບກຳຂໍ້ມູນ

ເຄື່ອງມືທີ່ໃຊ້ໃນການວິໄຈຄັ້ງນີ້ປະກອບດ້ວຍ ແບບສອບຖາມ ແລະ ແບບ ສຳພາດເປັນເຄື່ອງມືໃນການເກັບກຳຂໍ້ມູນທັງໝົດ ເຊິ່ງມີລັກສະນະຄຳຕອບເປັນແບບປະມານຄ່າ 5 ລະດັບຂອງ Likert Scale (Likert, 1932)ເຊິ່ງມີຂະບວນການສ້າງເຄື່ອງມືດັ່ງນີ້:

ພາຍຫຼັງຜູ້ຄົ້ນຄວ້າໄດ້ສັງລວມບັນດາເອກະສານທີ່ກ່ຽວຂ້ອງທັງໝົດແລ້ວ ຄັດຈ້ອນເອົາບັດດາຂໍ້ມູນທີ່ກ່ຽວຂ້ອງກັບຈຸດປະສົງຂອງການຄົ້ນຄວ້າ ເພື່ອມາສ້າງແບບສອບຖາມ ແລະ ແບບ ສຳພາດ. ເມື່ອສ້າງແບບສອບຖາມສຳ ແລະ ແບບສຳພາດສຳເລັດແລ້ວ ໄດ້ນຳໄປໃຫ້ຜູ້ຊ່ຽວຊານ 3 ທ່ານ ກວດຄວາມສອດຄ່ອງຂອງແຕ່ລະຄຳຖາມໃນແບບສອບຖາມ ແລະ ແບບ ສຳພາດ ພາຍຫຼັງການປະເມີນທຸກຂໍ້ຄຳຖາມຈາກຜູ້ຊ່ຽວຊານເຫັນວ່າ ທຸກຂໍ້ຄຳຖາມມີຄ່າ IOC = 0.66-1. ຈາກນັ້ນໄດ້ນຳແບບສອບຖາມ ແລະ ແບບສຳພາດມາປັບຄືນບາງຄຳແນະນຳເພີ່ມເຕີມຈາກຜູ້ຊ່ຽວຊານ ເພື່ອໃຫ້ແບບສອບຖາມ ແລະ ແບບສຳພາດມີຄວາມສົມບູນຂຶ້ນ.

### 2.3 ການເກັບຮວບຮວມຂໍ້ມູນ

ການເກັບຂໍ້ມູນເພື່ອການສຶກສາໃນຄັ້ງນີ້ແມ່ນເກັບແບບງ່າຍດາຍ ໂດຍການນຳແບບສອບຖາມຈຳນວນ 104ສະບັບໄປຢາຍໃຫ້ພະນັກງານກຸ່ມເປົ້າໝາຍຕອບ ໂດຍການອະທິບາຍວິທີການຕອບຢ່າງລະອຽດ ແລະ ໃຫ້ເວລາຕອບປະມານ 10 ນາທີ ແລ້ວເກັບແບບສອບຖາມຄືນ ເຊິ່ງສາມາດເກັບແບບສອບຖາມຄືນໄດ້ທັງໝົດ 100%.

### 2.4 ການວິເຄາະຂໍ້ມູນ

ບັນດາຂໍ້ມູນທັງໝົດທີ່ໄດ້ຈາກແບບສອບຖາມແມ່ນໄດ້ນຳມາວິເຄາະດ້ວຍໂປຼແກຼມ SPSS version 2025 ເພື່ອວິເຄາະຫາຄ່າສະເລ່ຍ (Mean) ແລະ ຄ່າຜັນປ່ຽນມາດຖານ (S.D).

### 3. ຜົນໄດ້ຮັບ

ຜົນການສຶກສາພົບວ່າສະພາບການນຳໃຊ້ທັກສະໄອຊີທີ (ICT) ຂອງຄູໃນວິທະຍາໄລຄູຫຼວງພະບາງ ດ້ານທັກສະການນຳໃຊ້ຄອມພິວເຕີ ໂດຍພາບລວມແມ່ນຢູ່ໃນລະດັບຫຼາຍ ( Mean = 3,86; S. D = 0,84), ດ້ານທັກສະການນຳໃຊ້ອິນເຕີເນັດ ໂດຍພາບລວມແມ່ນຢູ່ໃນລະດັບຫຼາຍ (Mean = 3,72; S. D = 0.86), ດ້ານທັກສະການນຳໃຊ້ອຸປະກອນໄອຊີທີ ໂດຍພາບລວມແມ່ນຢູ່ໃນລະດັບຫຼາຍ (Mean = 4,04; S. D = 0,84), ດ້ານທັກສະການນຳໃຊ້ໄອຊີທີ (ICT) ເຂົ້າໃນການຮຽນ-ການສອນ ໂດຍພາບລວມແມ່ນຢູ່ໃນລະດັບຫຼາຍ (Mean = 3,74; S. D = 0,84) ດັ່ງທີ່ສະແດງໃນ ຕາຕະລາງທີ 1.

ດ້ານແນວທາງການພັດທະນາທັກຊະການນຳໃຊ້ໄອຊີທີເຫັນວ່າ ສ່ວນໃຫຍ່ໄດ້ສະເໜີວ່າຜູ້ບໍລິຫານຄວນດຳເນີນເຜີຍແຜ່ ຫຼື ແນະນຳທັກສະການນຳໃຊ້ຄອມພິວເຕີພື້ນຖານໃຫ້ແກ່ ຄູ-ອາຈານ ໃນໂຮງຮຽນຄື: ການຈັດການປະເມີນເບື້ອງຕົ້ນ, ວາງແຜນ ແລະ ກະກຽມ, ຈັດຝຶກອົບຮົມພາຍໃນ ຫຼື ເຊື້ອເຊີນຜູ້ຊຳນານງານຈາກພາຍນອກ, ຈັດເຝິກອົບຮົມການນຳໃຊ້ງານໂປຣແກຣມ ແລະ ເພື່ອນຊ່ວຍເພື່ອນຜ່ານການແລກປ່ຽນ. ທັດມາ ແມ່ນສະເໜີໃຫ້ມີການເລືອກຊື້ Hardware, Software ເພື່ອແກ້ໄຂບັນຫາ ແລະ ການບຳລຸງຮັກສາ, ຊຸກຍູ້ ແລະ ຮ່ວມມືກັບບຸກຄະລາກອນເພື່ອພັດທະນາຕົນເອງໃນຫຼາຍຊ່ອງທາງ. ການຈັດການກັບຂໍ້ມູນຂ່າວສານ, ສ້າງ ແລະ ແນະນຳວິທີການຈັດເກັບຂໍ້ມູນໃຫ້ຜູ້ບໍລິຫານ ແລະ ຄູ-ອາຈານ ພາຍໃນໂຮງຮຽນ.ພ້ອມນີ້ຍັງມີຈຳນວນໜຶ່ງສະເໜີໃຫ້ມີການ ສ້າງແຜນການໃນການແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນ ກັບພາກສ່ວນພາຍນອກ. ການນຳໃຊ້ເວບບຼາວເຊີ (Web browser) ແລະ ການຄົ້ນຫາຂໍ້ມູນ (Search Engine) ເປີດໂອກາດໃຫ້ຄູ-ອາຈານສາມາດແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນ ການໃຊ້ຈົດໝາຍອີເລັກໂທນິກ (E-mail) ສ້າງແຜນການໃນການຈັດເຝິກອົບຮົມ, ການໃຊ້ຂໍ້ມູນຮ່ວມກັນຜ່ານລະບົບເຄືອຂ່າຍ (Network) ສ້າງກິດຈະກຳຕ່າງໆ ທີ່ມີລັກສະນະໂອ້ລົມ ແລະ ເປີດໂອກາດໃຫ້ຫລາຍພາກສ່ວນທີ່ມີຄວາມກ່ຽວຂ້ອງກັນເຂົ້າຮ່ວມ.

ນອກຈາກນີ້ກຸ່ມເປົ້າໝາຍຍັງສະເໜີໃຫ້ສະຖາບັນ ຈັດຫາອຸປະກອນ ໄອຊີທີ ແລະ ອຸປະກອນເຊື່ອມຕໍ່, ຈັດຫາ ອຸປະກອນທີຈຳເປັນຕໍ່ການເຮັດວຽກງານຝຶກອົບຮົມການນຳໃຊ້ນະວັດຕະກຳໃໝ່ໆ. ການບຳລຸງຮັກສາ ອຸປະກອນໄອຊີທີ, ຈັດກອງປະຊຸມສຳມະນາການນຳໃຊ້, ການແກ້ໄຂບັນຫາຕ່າງໆ ໃຫ້ແກ່ບຸກຄະລາກອນ.

ພ້ອມກັນນີ້ກຸ່ມເປົ້າໝານຍຍັງ ສະເໜີໃຫ້ມີການຈັດໃຫ້ມີລະບົບ Internet Website online ທີ່ອຳນວຍຄວາມສະດວກແກ່ການຮຽນ-ການສອນ ຢ່າງມີປະສິດພາບ.ການນຳໃຊ້ໄອຊີທີສະໜັບສະໜູນທັກສະການຄິດ ແລະ ຍົກລະດັບຜົນໄດ້ຮັບທາງການຮຽນຂອງຜູ້ຮຽນ ຄູ-ອາຈານສາມາດແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນ, ການນຳໃຊ້ໄອຊີທີ ໃນການວັດ ແລະ ປະເມີນຜົນ ການຮຽນ-ການສອນ, ຈັດກອງປະຊຸມຝຶກອົບຮົມການນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ ໃຫ້ແກ່ຄູ-ອາຈານເພື່ອ ພັດທະນາໃຫ້ທັນກັບສະພາບການປ່ຽນແປງ. ການນຳໃຊ້ໄອຊີທີເຂົ້າໃນການຮຽນ-ການສອນ, ໂຮງຮຽນຈັດຫາ ແລະ ສະໜອງສິ່ງອຳນວຍຄວາມສະດວກຕ່າງໆ ແກ່ບຸກຄະລາກອນ, ອີງກອນ ແລະ ຈັດຝຶກອົບຮົມການນຳໃຊ້ແກ່ບຸກຄະລາກອນ.

### 4. ວິພາກຜົນ

ສະພາບທັກສະການນຳໃຊ້ໄອຊີທີ (ICT) ຂອງຄູໃນວິທະຍາໄລຄູຫຼວງພະບາງ ພົບວ່າ ດ້ານທັກສະການນຳໃຊ້ອິນເຕີເນັດຢູ່ໃນລະດັບຫຼາຍ ຊຶ່ງໃຊ້ອິເຕີເນັດເຂົ້າໃນການຕິດຕໍ່ສື່ສານ ໂດຍຜ່ານ ແອັບພິເຄຊັ່ນ ວອດແອັບ (WhatsApp), (Facebook), (E-mail), Line, Messenger ແລະ ອື່ນໆ ພ້ອມກັນນີ້ຍັງໃຊ້ອິນເຕີເນັດໃນການຄົ້ນຫາຂໍ້ມູນຜ່ານແອັບພິເຄຊັ່ນ Google ເຊິ່ງສອດກັບ Butphomvihane et al. ( 2017) ພົບວ່າ ລະດັບທັກຊະການໃຊ້ອິນເຕີເນັດຂອງ ອາຈານ ຢູ່ໂຮງຮຽນມັດທະຍົມ ສຶກສາສົມບູນເຈົ້າອານຸວົງ ເມືອງຈັນ ທະບູລີນະຄອນຫຼວງວຽງຈັນ ແມ່ນຢູ່ໃນລະດັບຫຼາຍ. ດ້ານທັກສະການນຳໃຊ້ອຸປະກອນໄອຊີທີ ຢູ່ໃນລະດັບຫຼາຍ ໂດຍສະເພາະ ການນຳໃຊ້ໂທລະສັບ (Smart phone) ເຊື່ອມຕໍ່ອຸປະກອນອິນເຕີເນັດ (Wi-Fi), ນຳໃຊ້ ເຄື່ອງປິ້ນເອກະສານ (Printer), ນຳໃຊ້ ເຄື່ອງສະແກນເອກະສານ (Scanner), ນຳໃຊ້ ຢູເອັສບີ (USB) ແລະ ນຳໃຊ້ ເຄື່ອງສາຍ (LCD) ເຊິ່ງສອດຄ່ອງກັບ Anath (2014) ພົບວ່າການນຳໃຊ້ອຸປະກອນໄອຊີທີ (ICT) ເຂົ້າໃນການ ຈັດການຮຽນ-ການສອນຂອງຄູໃນໂຮງຮຽນດາລຸອາເລບມູນນິທິເມືອງສະຕູນ ຢູ່ໃນລະດັບຫຼາຍ. ດ້ານທັກສະການນຳໃຊ້ໄອຊີທີເຂົ້າໃນການຮຽນ-ການສອນ ຢູ່ໃນລະດັບຫຼາຍ ໂດຍສ່ວນຫຼາຍແລ້ວຄູໃຊ້ໄອຊີທີເຂົ້າໃນການແຕ່ງບົດສອນ, ບັນທຶກຄະແນນຂອງນັກຮຽນ, ສ້າງຄຳຖາມສອບເສັງ, ຜະລິດສື່ການຮຽນ-ການສອນ, ສ້າງຖານຂໍ້ມູນເພື່ອບັນທຶກຂໍ້ມູນຂອງນັກຮຽນ, ສື່ການຮຽນ-ການສອນໃນຮູບແບບບົດຮຽນຈາກອິນເຕີເນັດ ມາປະກອບກິດຈະກາການຮຽນການສອນ, ການກວດກາປະເມີນການຮຽນ, ການຕິດຕໍ່ສື່ສານຜ່ານແອັບພິເຄຊັ່ນ ໃນການຮຽນ-ການສອນ ລະຫວ່າງຄູກັບນັກຮຽນ ແລະ ໄດ້ນຳໃຊ້ຄອມພິວເຕີ ຮ່ວມກັບ ເຄື່ອງສາຍພາບໂປຣເຈັກເຕີ (LCD) ເປັນເຄື່ອງມືໃນການຮຽນ-ການສອນ ເຊິ່ງສອດຄ່ອງກັບຜົນການຄົ້ນຄວ້າຂອງ SYSAVANG (1988) ໄດ້ສຶກສາກ່ຽວກັບການໃຊ້ໄອຊີທີ (ICT) ເພື່ອການຮຽນ-ການສອນຂອງ ຄູປະຖົມສຶກສາ ໃນສັງກັດສຳນັກງານເຂດພື້ນຖານການສຶກສາປະຖົມສຶກສານະຄອນສີທຳມະລາດ ເຂດ3 ພົບວ່າ ປັນຫາການໃຊ້ໄອຊີທີ (ICT) ໃນການຮຽນ-ການສອນ ຢູ່ໃນລະດັບຫຼາຍທີ່ສຸດ. ເນື່ອງຈາກວ່າຄວາມທະນັດທັກຊະທາງດ້ານໄອຊີທີ (ICT) ສາມາດຊ່ວຍໃຫ້ຄູ ແຕ່ງບົດສອນ ສ້າງສື່ການສອນ ໄດ້ຢ່າງສະດວກ ແບະ ວ່ອງໄວ ປະຫຍັດເວລາອີກດ້ວຍ (Meenakshi , 2013). ແຕ່ກົງກັນຂ້າມກັບບົດຄົ້ນຄວ້າຂອງ SYMAVONG (2022)

ໄດ້ຄົ້ນຄ້ວາກ່ຽວກັບການນຳໃຊ້ ICT ເຂົ້າໃນການຮຽນ-ການສອນ ໂຮງຮຽນມັດທະຍົມສຶກສາວຽງຈັນ ເມືອງຈັນທະບູລີ ນະຄອນຫຼວງວຽງຈັນ ຜົນການຄົ້ນຄວ້າພົບວ່າ ສະພາບ ການນຳໃຊ້ ໄອຊີທີ ເຂົ້າໃນການຮຽນການສອນໃນໂຮງຮຽນມັດທະຍົມສົມບູນວຽງຈັນ 5 ດ້ານ ໂດຍລວມຢູ່ໃນລະດັບໜ້ອຍ.

ແນວທາງການພັດທະນາທັກຊະການນຳໃຊ້ໄອຊີທີ ເຂົ້າໃນການຈັດການຮຽນການສອນ ສ່ວນໃຫຍ່ແມ່ນສະເໜີໃຫ້ສະຖາບັນສະໜອງອຸປະກອນເຄື່ອງມື ໄອຊີທີໃຫ້ມີຄວາມພຽງພໍ ແລະ ທັນສະໄໝ, ມີການຈັດຝຶກອົບຮົມໃຫ້ຄູໄດ້ມີການແລກປ່ຽນຮຽນຮູ້ປະສົບການໃໝ່ໆເຊິ່ງກັນ ແລະ ກັນ ເຊິ່ງ ສອດຄ່ອງກັບຜົນການຄົ້ນຄວ້າຂອງ Sinlapasakkhajorn (2015) ທີ່ໄດ້ສຶກສາກ່ຽວກັບ ສະພາບ, ບັນຫາ ແລະ ຄວາມຕ້ອງການໃຊ້ ເຕັກໂນໂລຊີຂໍ້ມູນຂ່າວສານທາງການສຶກສາ ໃນໂຮງຮຽນສັງກັດສຳນັກງານເຂດພື້ນທີ່ການສຶກສາ ນະຄອນພະນົມ ເຂດ 2 ພົບວ່າຄວາມບໍ່ພຽງພໍຂອງອຸປະກອນໄອຊີທີ, ຄວາມຈຳເປັນຕ້ອງ ຈັດຝຶກອົບຮົມໃຫ້ຄູກ່ຽວກັບການຮຽນຮູ້ດ້ານໄອຊີທີໃໝ່ໆເພື່ອການຈັດການຮຽນ-ການສອນຂອງຄູ (Mishra, 2006). ແລະ ຍັງສອດຄ່ອງກັບບົດຄົ້ນຄວ້າຂອງ Sisombath et al (2022) ພົບວ່າ ການຈັດການຮຽນການສອນ ທາງອອນລາຍ ໃນຊ່ວງໄລຍະຂອງການແຜ່ລະບາດຂອງພະຍາດ COVID-19 ຂອງ ຄູ-ອາຈານ ຄະນະ ສຶກສາສາດມະຫາວິທະຍາໄລສຸພານຸວົງ ເຫັນວ່າປະເຊີນກັບສິ່ງທ້າທາຍຫຼາຍຢ່າງເຊັ່ນ ອິນເຕີເນັດຊ້າ, ຄອມພິວເຕີຊ້າເປີດເຄື່ອງໃຊ້ເວລາດົນ, ນັກຮຽນສ່ວນຫຼາຍຢູ່ເຂດຊົນນະບົດຫ່າງໄກຊອກຫຼີກ ບໍ່ມີສັນຍານອິນເຕີເນັດ ແລະ ບໍ່ສາມາດຂຶ້ນຫ້ອງຕາມກຳນົດເວລາໄດ້ນອກຈາກນີ້ຄວາມສາມາດ ເທັກນິກການຜະລິດສື່ວິດີໂອການສອນຂອງຄູ-ອາຈານຍັງຈຳກັດ. ສະນັ້ນ,ຈຶ່ງມີຄວາມຈຳເປັນຕ້ອງໄດ້ພັດທະນາ ສະໜອງອຸປະກອນ ໄອຊີທີ ໃຫ້ມີຄວາມທັນສະໄໝ ແລະ ພຽງພໍ. ບໍ່ພຽງເທົ່ານັ້ນບຸກຄະລາກອນຄູ-ອາຈານຕ້ອງໄດ້ຮັບການຝຶກອົບຮົມ ຫຼື ຍົກລະດັບຄວາມຮູ້ທາງດ້ານໄອຊີທີໃຫ້ມີ ຄວາມສາມາດເສີມສ້າງສື່ການຮຽນການສອນທີ່ຫຼາກຫຼາຍ ເຊັ່ນ ການອັດຄິບ, ຕັດຕໍ່ຄິບວິດີໂອການສອນ ແລະ ສ້າງເວັບໄຊ ຫຼື ເວັບເພດ ເພື່ອເອົາຂໍ້ບົດຮຽນລົງໄວ້ໃຫ້ນັກຮຽນສາມາດເຂົ້າໄປສຶກສາຄົ້ນຄວ້າດ້ວຍຕົນເອງໄດ້ທຸກທີ່ທຸກເວລາ (Sisombath et al, 2024).

**5. ສະຫຼຸບ**

ຜ່ານການຄົ້ນຄວ້າໂດຍການສຶກສາບັນຫາໃນຄັ້ງນີ້ສາມາດເຫັນໄດ້ວ່າຄູສອນໃນວິທະຍາໄລຄູຫຼວງພະບາງມີຄວາມຮູ້ພື້ນຖານໃນການເຄື່ອງມື ICT ຊ່ວຍສອນຂອງຕົນເອງ ເຊັ່ນ: ການໃຊ້ຄອມພິວເຕີຊ່ວຍໃນການແຕ່ງບົດສອນ ແລະ ການໃຊ້ສື່ມູຕິມີເດຍ, ພ້ອມດຽວກັນນັ້ນຄູສອນສ່ວນໜຶ່ງສາມາດນຳໃຊ້ເວັບໄຊ້ບາງສ່ວນເຂົ້າໃນການປະເມີນຜົນການຮຽນການສອນຮູບແບບທາງອອນລາຍດ້ວຍ Google From, Kahoot. ເຖິງຈະມີພື້ນຖານບາງທັກສະກໍ່ຕາມ ຄູສອນໃນວິທະຍາໄລຄູຍັງຕ້ອງໄດ້ສືບຕໍ່ຜັນຂະຫຍາຍພັດທະນຳທັກສະການນຳໃຊ້ເຄື່ອງມື ICT ໃຫ້ມີຄວາມຄ່ອງແຄ້ວຂຶ້ນຕື່ມ, ສືບຕໍ່ຝຶກປະຕິບັດການໃຊ້ງານບາງແອັບພິເຄຊັນຕ່າງໆທີ່ກ່ຽວຂ້ອງກັບການຈັດການຮຽນ-ການສອນເພື່ອໃຫ້ມີຄວາມຊຳນານຂຶ້ນເລື້ອຍໆ.

ຂໍ້ສະເໜີແນະໃນແນວທາງການພັດທະນາ ICT ຂອງສະຖານການສຶກສາຄູໃນ ສປປ ລາວ ຄວນສົ່ງເສີມໃຫ້ຄູໄດ້ສຶກສາຕໍ່ສາຂາ ICT, ຄວນຈັດຝຶກອົບຮົມ ICT ຢ່າງຕໍ່ເນື່ອງ, ຄວນສະໜັບສະໜູນດ້ານງົບປະມານໃຫ້ພຽງພໍ, ຄວນສ້າງຫ້ອງປະຕິບັດການ ICT, ຄວນຕອບສະໜອງເຄື່ອງມື ICT ໃຫ້ພຽງພໍ ແລະ ຄວນມີການຕິດຕາມກວດກາການນຳໃຊ້ ICT ຂອງຄູໃນການຈັດການຮຽນ-ການສອນ ເປັນປະຈຳເພື່ອອຳນວຍຄວາມສະດວກເວລາພົບບັນຫາ.

**6. ຂໍ້ຂັດແຍ່ງ**

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອຜົນປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

**7. ເອກະສານອ້າງອີງ**


Anath, K. (2014). Study the situation, problems and necessity of using ICT to manage teaching and learning of teachers in Darul Aleb Foundation School, Satun District.

Butphomvihane, S., Sithavong, K., & Phetsiriseng, C. (2017). Online Teaching and Learning Assessment at Lao Universities.

DIGITAL KIDS ASIA-PACIFIC. (2020). *Insights into the digital lives of children in Indonesia, Lao People's Democratic Republic, and the Philippines.* UNESCO, KOREAN REPUBLIC, SEAMEO. Retrieved from Insights into digital lives of children. SEAMEO CED: UNESCO.

Ghavifekr, S., & Rosdy, A. W. (2015). Teaching and Learning with Technology: Effectiveness of ICT Integration in Schools. *International Journal of Research in Education and Science (IJRES)*, *1*(2), 175-191.

Likert, R. (1932). *APA PsyNet*. Retrieved from https://psycnet.apa.org/record/1933-01885-001: https://psycnet.apa.org/record/1933-01885-001

Meenakshi , C. (2013). Importance of ICT in Education. *Journal of Research & Method in Education (IOSR-JRME)*, 3-8.

Mishra, P. &. (2006). Technological Pedagogical Content Knowledge: A Framework for Teacher Knowledge.

National Assembly. (2020). *Education (Amended)*.

National University of Lao. (2022, 11 3). *ມຊ*. Retrieved from www.nuol.edu.la: https://www.nuol.edu.la/index.php/en/academic-affairs/ict-and-elearning-event

Ratheeswari, K. (2018). Information communication technology in education. Applied and Advanced Research. *Journal of Applied and Advanced Research*, *3*(1), 45-48.

Sinlapasakkhajorn, N. (2015). The Study of Issues and Obstacles Facing the Use of Media and Technology for.

SISOMBATH, S., PHAIYAVONG, S., THIPPHAPHONE, K., PHATHOUMVAN, P., & NORDALA, P. (2022). Learning in the World of Information and Communication Technology. *Souphanouvong University Journal of Multidisciplinary Research and Development*, *8*(2), 28-35. doi:https://doi.org/10.69692/sujournal2022.8.2.31-38

Sisombath, S., Xaychalern, K., Thipphaphone, K., Buolakham, S., & PANFONGPHET, S. (2024). Learning in the World of Information and Communication Technology through Online Videos: Developing the Ability to Edit videos for Teaching of Lecturers at Souphanouvong University . *Souphanouvong University Journal Multidisciplinary Research and Development*, *10*(4), 201–209. https://doi.org/10.69692/SUJMRD1004201

SYMAVONG, V. (2022). Teaching and Learning with Technology: Effectiveness of ICT Integration in Schools. *Indonesian Journal of Educational Research*, 133-140.

SYSAVANG, K. (1988). Thailand's information and communication technology in education. *Indonesian Journal of Educational Research*, *2*, 133-140. doi:DOI:10.17509/ijert.v2i2.43554

UNICEF. (2023, February). *Unicef Lao*. Retrieved from www.unicef.org: https://www.unicef.org/laos/press-releases/new-school-year-covid-19-era

**ຕາຕະລາງ 1:** ທັກສະການນຳໃຊ້ໄອຊີທີ (ICT) ຂອງຄູໃນວິທະຍາໄລຄູຫຼວງພະບາງທັງ 4 ດ້ານ.

| ລຳດັບ | ທັກສະການນຳໃຊ້ໄອຊີທີ (ICT) ຂອງຄູໃນວິທະຍາໄລຄູຫຼວງພະບາງ. | ສະພາບການນຳໃຊ້ ICT ຂອງຄູ | | ແປຜົນ |
|---|---|---|---|---|
| | | $\overline{X}$ | S.D. | |
| 1 | ດ້ານທັກສະການນຳໃຊ້ຄອມພິວເຕີ | 3,86 | 0,84 | ລະດັບຫຼາຍ |
| 2 | ດ້ານທັກສະການນຳໃຊ້ອິນເຕີເນັດ | 3,72 | 0,86 | ລະດັບຫຼາຍ |
| 3 | ດ້ານທັກສະການນຳໃຊ້ອຸປະກອນໄອຊີທີ | 4,04 | 0,84 | ລະດັບຫຼາຍ |
| 4 | ດ້ານທັກສະການນຳໃຊ້ ICT ເຂົ້າໃນການຮຽນການສອນ | 3,74 | 0,84 | ລະດັບຫຼາຍ |
| | ລວມ | 3,83 | 0,84 | ລະດັບຫຼາຍ |